ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມຈັດຕັ້ງ ແລະ ພະນັກງານ

ວິທະຍາໄລ ກະສິກຳ ແລະ ປ່າໄມ້ ພາກເໜືອ

# ບົດສະຫຼຸບລາຍງານກອງປະຊຸມ
# ຜົນການຝຶກອົບຮົມທົດລອງຫຼັກສູດໄລຍະສັ້ນ ສຳລັບຊາວກະສິກອນ ຄັ້ງທີ່ I




ກັນຍາ 2018

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້
ກົມຈັດຕັ້ງ ແລະ ພະນັກງານ
ວິທະຍາໄລກະສິກຳ ແລະ ປ່າໄມ້ ພາກເໜືອ ເລກທີ ...2128... /ວກປໜ

ນະຄອນ ຫລວງພະບາງ, ວັນທີ 12 ກັນຍາ 2018

# ບົດສະຫຼຸບລາຍງານກອງປະຊຸມ
# ຜົນການຝຶກອົບຮົມທົດລອງຫຼັກສູດໄລຍະສັ້ນ ສໍາລັບຊາວກະສິກອນ ຄັ້ງທີ່ I
# ວັນທີ 12 ກັນຍາ 2018 ວກປໜ

- ອີງຕາມ ແຜນກິດຈະກໍາຂອງໂຄງການ SURAFCO III ປີ 2018 ວາງອອກ
- ອີງຕາມການຈັດຕັ້ງກອງປະຊຸມປະເມີນຜົນການຝຶກອົບຮົມຫຼັກສູດໄລຍະສັ້ນຂອງຊາວກະສິກອນ

ດັ່ງນັ້ນ, ທາງຄະນະຮັບຜິດຊອບຈັດກອງປະຊຸມປະເມີນຜົນ ການຝຶກອົບຮົມທົດລອງຫຼັກສູດໄລຍະສັ້ນຂອງຊາວກະສິກອນ ຈິ່ງໄດ້ສະຫຼຸບລາຍງານຜົນຂອງກອງປະຊຸມປະເມີນຜົນ ການຝຶກອົບຮົມທົດລອງຫຼັກສູດໄລຍະສັ້ນຂອງຊາວກະສິກອນ ຂອງວິທະຍາໄລກະສິກໍາ ແລະ ປ່າໄມ້ພາກເໜືອ ຄັ້ງທີ່ I ຊຶ່ງມີເນື້ອໃນລະອຽດດັ່ງນີ້:

## I. ຈຸດປະສົງ:

-ເພື່ອທົບທວນຄືນວຽກງານການຈັດຕັ້ງປະຕິບັດກ່ຽວກັບ ຫຼັກສູດໄລຍະສັ້ນທີ່ຜ່ານມາ

- ເພື່ອຮັບຟັງບັນຫາ ຫຼື ສິ່ງທ້າທາຍ ຈາກຜູ້ຮັບຜິດຊອບ/ຄູຝຶກ ແລະ ວິທີການປັບປຸງ ແກ້ໄຂຫຼັກສູດໄລຍະສັ້ນຮ່ວມກັນ ເພື່ອໃຫ້ສອດຄ່ອງກຸ່ມຜູ້ທີ່ຈະມາຈ້າງ ແລະ ເໝາະສົມກັບຄົນທີ່ມາໃຊ້ບໍລິການ.

-ເພື່ອກໍານົດໜ້າວຽກໃນຕໍ່ໜ້າ ແລະ ແບ່ງຄວາມຮັບຜິດຊອບ ໃຫ້ກະກຽມຄວາມພ້ອມ ວິທີການໂຄສະນາໃນຕໍ່ໜ້າຮ່ວມກັນ.

## II. ເວລາ ແລະ ສະຖານທີ່

ກອງປະຊຸມປະເມີນຜົນ ການຝຶກອົບຮົມທົດລອງຫຼັກສູດໄລຍະສັ້ນຂອງຊາວກະສິກອນ ຂອງວິທະຍາໄລກະສິກໍາ ແລະ ປ່າໄມ້ ພາກເໜືອຄັ້ງທີ່ I ໄດ້ຈັດຂຶ້ນ ໃນວັນທີ 12 ກັນຍາ 2018 ທີ່ຫ້ອງປະຊຸມຂອງ ວກປໜ ໂດຍການເປັນປະທານ ຂອງ ທ່ານ ອາຈານ ທອງສະມຸດ ພູມມະສອນ ອໍານວຍການວິທະຍາໄລ ວກປໜ.

## III. ຄະນະຮັບຜິດຊອບ

ພະນັກງານຫ້ອງການພົວພັນ ແລະ ການຮ່ວມມື

## IV. ຈຳນວນຜູ້ເຂົ້າຮ່ວມ

ກອງປະຊຸມປະເມີນຜົນ ການຝຶກອົບຮົມທົດລອງຫຼັກສູດໄລຍະສັ້ນຂອງຊາວກະສິກອນ ວິທະຍາໄລກະສິກຳ ແລະ ປ່າໄມ້ ພາກ ເໜືອ ຄັ້ງທີ່ I ນີ້ ມີຜູ້ເຂົ້າຮ່ວມທັງໝົດ 22 ທ່ານ, ຍິງ 5 ທ່ານ. ໃນນີ້ມີ ປະທານກອງປະຊຸມ 1 ທ່ານ; ທີມງານໂຄງການ SURAFCO 2 ທ່ານ, ຍິງ 1 ທ່ານ; ຮອງອານວຍການວິທະຍາໄລ 1 ທ່ານ; ຫົວໜ້າຫ້ອງການ ພົວພັນ ແລະ ການຮ່ວມມືຂອງ 1 ທ່ານ; ຫົວໜ້າຄະນະວິຊາທຸລະກິດ ກະສິກຳ 1 ທ່ານ; ຮອງຫົວໜ້າຫ້ອງການ/ຄະນະ 3 ທ່ານ ແລະ ພະນັກງານວິຊາການ ວກປໜ ຈຳນວນ 10 ທ່ານ.

## V. ເນື້ອໃນກອງປະຊຸມ

1. ພວກທ່ານ ມີຄວາມພ້ອມ ຫຼາຍໜ້ອຍສ່ຳໃດສຳລັບ ວິຊາທີ່ທ່ານຮັບຜິດຊອບ ທີ່ຈະເປີດບໍລິການໃຫ້ສັງຄົມ ?
2. ທ່ານໝັ້ນໃຈໃນຄຸນນະພາບຂອງ ການຝຶກຫົວຂໍ້ ຂອງທ່ານ ຮັບຜິດຊອບ ຫຼາຍໜ້ອຍສ່ຳໃດ ?
3. ທ່ານ ຄິດວ່າຍ້ອນຫຍັງ ຈຶ່ງບໍ່ມີ ຄົນ ຫຼື ໂຄງການ ມາໃຊ້ບໍລິການ ຫຼັກສູດໄລຍະສັ້ນຂອງ ວກປໜ ?
   (ຍ້ອນໄລຍະເວລາຝຶກ?/ລາຄາແພງໂພດ?/ມີຄູ່ແຂ່ງຫຼາຍ?/ການໂຄສະນາດີແລ້ວບໍ່ ?....
4. ທ່ານ ຄິດວ່າ ຕ້ອງມີການ ປັບປຸງ ຫຍັງອີກ ເພື່ອໃຫ້ມີຄົນ ມາຈ້າງ ຫຼື ໃຊ້ບໍລິການຫຼັກສູດ ໄລຍະສັ້ນ ວກປໜ ?

## VI. ຜົນໄດ້ຮັບຂອງກອງປະຊຸມ

### 6.1 ຕີລາຄາດ້ານດີຂອງການຝຶກອົບຮົມໄລຍະຜ່ານມາ

- ວິທະຍາໄລ ໄດ້ອຳນວຍຄວາມສະດວກທາງດ້ານການຕິດຕໍ່ສື່ສານກັບທຸກພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ວິທະຍາໄລ, ຊາວກະສິກອນ ແລະ ອົງການຈັດຕັ້ງຕ່າງໆ ແລະ ສະຖານທີ່ໃນການຝຶກອົບຮົມ
- ໂຄງການ SURAFCO ໄດ້ສະໜັບສະໜູນທາງດ້ານງົບປະມານໃນການຈັດຝຶກອົບຮົມຄັ້ງນີ້
- ນັກສຳມະນາກອນສ່ວນໃຫຍ່ ໄດ້ໃຫ້ຄວາມຮ່ວມມືເປັນຢ່າງດີ ພ້ອມທັງມີການສົນທະນາ ແລະ ແລກປ່ຽນ ບົດຮຽນຢ່າງກະຕືລືລົ້ນ ເຮັດໃຫ້ບັນຍາກາດຂອງການຝຶກມີຄວາມຄຶກຄື້ນ ແລະ ເປັນກັນເອງຕະຫຼອດການຝຶກ ອົບຮົມ.
- ທີມງານຄູຝຶກມີການຖອດຖອນບົດຮຽນຮ່ວມກັນ ແລະ ຮັບຟັງບັນຫາ ເພື່ອປັບປຸງການຝຶກໃຫ້ດີຂຶ້ນ.
- ທີມຄູຝຶກໄດ້ມີຄວາມສາມັກຄີ ແລະ ອະທິບາຍຊ່ວຍກັນ ເພື່ອໃຫ້ຜູ້ເຂົ້າຮ່ວມເຂົ້າໃຈເນື້ອໃນບົດຮຽນ ແລະ ກິດຈະກຳຕ່າງໆ
- ທີມງານຄູຝຶກມີການປະເມີນຄວາມຮູ້ກ່ອນນັກສຳມະນາກອນ ແລະ ຫຼັງການຝຶກແລ້ວ ເພື່ອນຳມາປັບປຸງ ການສິດສອນໃຫ້ດີຂຶ້ນ.

### 6.2 ດ້ານອ່ອນຂອງການຈັດຕັ້ງປະຕິບັດຂອງການຝຶກອົບຮົມໃນໄລຍະຜ່ານມາ

- ນັກສຳມະນາກອນທີ່ເຂົ້າຮ່ວມຝຶກບໍ່ສະໝໍ່າສະເໝີ (ບໍ່ສະເໝີຕົ້ນສະເໝີປາຍບາງເທື່ອກະຄາວຽກບ້ານ, ວຽກເຮືອນ)
- ນັກສຳມະນາກອນບາງຄົນບໍ່ຮູ້ໜັງສື
- ການໄປມາຫຍຸ້ງຍາກ ເພາະເຂົາເຈົ້າອາໄສໃຫ້ລູກຫຼານຂັບລົດມາສົ່ງ
- ຝຶກອົບຮົມໃນຫົວຂໍ້ບໍ່ຖືກກັບລະດູການ

6.3 ການວິເຄາະບັນຫາ, ສາເຫດ, ການແກ້ໄຂໃນຕໍ່ໜ້າ

| ລ/ດ | ບັນຫາ | ສາເຫດ | ວິທີການແກ້ໄຂ |
|---|---|---|---|
| 1 | ຊາວກະສິກອນບໍ່ມີເງິນຄ່າທຽມ | ເສດຖະກິດຄອບຄົວມີຄວາມຫຍຸ້ງຍາກຂາດເຂີນ | ຕ້ອງຕິດຕໍ່ ຫຼື ຊອກຫາໂຄງ ການທີ່ມີຄວາມຕ້ອງການຝຶກຫົວຂໍ້ນີ້ໃຫ້ກັບຊາວກະສິກອນບ້ານເປົ້າໝາຍຂອງໂຄງການ |
| 2 | ຊາວກະສິກອນບໍ່ມີເວລາ | ຢ້ານຂາດວຽກຂາດການໃນການດຳເນີນກິດຈະກຳຂອງຄອບຄົວ | ຕ້ອງແນະນຳໃຫ້ເຂົ້າໃຈ ແລະ ຕັດສິນໃຈເພື່ອເຂົ້າຝຶກອົບຮົມໄດ້ເຕັມທີ່ |
| 3 | ຊາວກະສິກອນຢູ່ຫ່າງໄກ ແລະ ສ່ວນໃຫຍ່ຂັບລົດຈັກ ບໍ່ເປັນ | ການໄປມາຫຍຸ້ງຍາກ ເພາະເຂົາເຈົ້າອາໄສໃຫ້ລູກຫຼານຂັບລົດມາສົ່ງ | ແຕ່ງຕັ້ງທີມງານຄູຝຶກລົງຝຶກອົບຮົມຢູ່ທ້ອງຖິ່ນຂອງຊາວກະສິກອນເລີຍ |
| 4 | ລະດູການໃນການຝຶກບໍ່ຖືກກັບຊ່ວງທີ່ຊາວກະສິກອນຕ້ອງການຝຶກ | ຄວາມຕ້ອງການຝຶກອົບຮົມໃນຫົວຂໍ້ບໍ່ຖືກກັບລະດູການຕົວຈິງ | ຕ້ອງປະສານສົບທົບກັນລະ ຫວ່າງຊາວກະສິກອນກັບຄູຝຶກເພື່ອວາງແຜນການຝຶກອົບຮົມໃຫ້ຖືກຕ້ອງຕາມລະດູການຕົວຈິງ |
| 5 | ຄວາມກະຕືລືລົ້ນຂອງຊາວກະສິກອນຕໍ່ຫົວຂໍ້ຝຶກອົບຮົມຍັງມີໜ້ອຍ | ຫຼາຍເລື່ອງ ອັນໃດກະບໍ່ດີ ຕິທັ້ນຕິໜີ້ ຄາທັ້ນຄາໜີ້ຕະຫຼອດ | ຕ້ອງລົງໂຄສະນາເພື່ອອະທິ ບາຍໃຫ້ເຂົາເຈົ້າເຂົ້າໃຈເຖິງຄວາມສຳຄັນຂອງຫົວຂໍ້ການຝຶກທີ່ມີຕໍ່ການດຳລົງຊີວິດປະ ຈຳວັນ |
| 6 | ຄອບຄົວມີຄົນໜ້ອຍ | ບໍ່ມີຜູ້ເຝົ້າເຮືອນ | ລົງສຳພາດ ແລະ ເກັບກຳຂໍ້ມູນຂອງຊາວກະສິກອນວ່າມີໜ້ອຍ ຫຼື ຫຼາຍປານໃດ ແລະ ແຕ່ງຕັ້ງທີມງານຄູຝຶກລົງຝຶກອົບຮົມຢູ່ທ້ອງຖິ່ນຂອງຊາວກະສິກອນເລີຍ ຖ້າເຫັນວ່າ ເໝາະສົມ |
| 7 | ຊາວກະສິກອນຍັງບໍ່ທັນຮັບຮູ້ຂໍ້ມູນຂອງຫຼັກສູດ | ການໂຄສະນາຍັງບໍ່ທັນກວ້າງຂວາງ | ສືບຕໍ່ໂຄສະນາໄປຕ່າງເມືອງ ແລະ ຕ່າງແຂວງຕື່ມ ທີ່ຍັງມີສ່ວນປູກໄມ້ເຊັ່ນ: ສວນໄມ້ສັກ, ຢາງພາລາ... |
| 8 | ບໍ່ສອດຄ່ອງກັບຄວາມຕ້ອງການຂອງປະຊາຊົນໃນບາງທ້ອງຖິ່ນ(ບໍ່ມີພື້ນທີ່ພຽງພໍ) | ບໍ່ສາມາດສ້າງລາຍຮັບ(ຜົນໄດ້ຮັບ)ໃນໄລຍະສັ້ນໄດ້ | ຄວນເລັ່ງໃສ່ ບໍລິສັດ ຫຼື ໂຄງການ ທີ່ມີພື້ນທີ່ຫຼາຍ |

## 6.4 ຂໍ້ສະເໜີ

ການລົງໂຄສະນາຂອງທີມງານຄູຝຶກ, ໄລຍະເວລາໃນການຝຶກຍາວໂພດ, ຢາກໃຫ້ລົງຝຶກອົບຮົມກັບທີ່ ຫຼື ທ້ອງຖິ່ນເລີຍ, ລາຄາໃນການຝຶກອຸປະກອນຄົງທີ່ຄວນປັບລົງຕື່ມບໍ່, ການຮ່ວມມືກັບສະຖາບັນການສຶກສາ,

ຄວາມສົນໃຈຂອງຊາວກະສິກອນ, ການໂຄສະນາທາງວິທະຍຸ, ໂທລະທັດ, ເປົ້າໝາຍຂອງກຸ່ມຜູ້ຝຶກຍັງຈຳກັດເອົາແຕ່ຊາວກະສິກອນ (ບໍ່ກວ້າງຂວາງ) ບໍ່ມີໂຄງການມາໃຊ້ບໍລິການ, ການໂຄສະນາບໍ່ຕໍ່ເນື່ອງ ແລະ ບໍ່ທົ່ວເຖິງ, ຕ້ອງແບ່ງຄວາມຮັບຜິດຊອບໃຫ້ກຸ່ມໃດໄປໂຄສະນາ, ການປະເມີນຫົວຂໍ້ຝຶກອົບຮົມຈາກຊາວກະສິກອນທີ່ໄດ້ຝຶກໄປ, ເຂົ້າຫາພາກສ່ວນຕ່າງໆ ການກຳນົດກຸ່ມເປົ້າໝາຍຍັງບໍ່ທັນຖືກຕ້ອງກັບຫົວຂໍ້ຝຶກອົບຮົມ, ຫຼັງຈາກຝຶກອົບຮົມແລ້ວແມ່ນຕ້ອງການສິ່ງຕອບແທນ, ຜູ້ປະສານງານ ແລະ ການຝາກຫຼັກສູດຝຶກອົບຮົມໄວ້ນຳສະຖານບັນຕ່າງໆ

## VII. ແຜນວຽກໃນຕໍ່ໜ້າ

1) ຈັດກອງປະຊຸມທົບທວນຫຼັກສູດໄລຍະສັ້ນທີ່ໄດ້ພັດທະນາມາແລ້ວ
   - 1.1 ເນື້ອໃນຫຼັກສູດ
   - 1.2 ລາຄາຫຼັກສູດ
   - 1.3 ໄລຍະເວລາຂອງຫຼັກສູດ
2) ພັດທະນາຫຼັກສູດໄລຍະສັ້ນ ຫົວຂໍ້ໃໝ່
   - 2.1 ການລ້ຽງປາ ແລະ ປະສົມພັນປາ
   - 2.2 ການກາເບ້ຍໄມ້ໃຫ້ໝາກ
   - 2.3 ການຜະລິດຝຸ່ນບົ່ມ ແລະ BE
   - 2.4 ການລ້ຽງແບ້, ແກະ
3) ຂຽນໂຄງການພາກທີ່ 63 ສົ່ງເສີມວິຊາການເພື່ອງົບປະມານລັດ ເພື່ອໃຫ້ມີການຝຶກອົບຮົມ ໃຫ້ຊາວກະສິກອນ
4) ປັບປຸງວິທີການ ໂຄສະນາຮູບແບບຕ່າງໆ (ວິທະຍຸ, ໂທລະພາບ, ໜັງສືພິມ, Facebook, website)
   - ຄົ້ນຫາຂໍ້ມູນບັນດາໂຄງການພັດທະນາຕ່າງໆ ທະຫານ,ຕຳຫຼວດ,ສະຫວັດການແຮງງານ
   - ປະສານງານກັບພະແນກແຮງງານ ແລະ ສະຫວັດດີການແຂວງ, ຊາວໜຸ່ມ, ແມ່ຍິງແຂວງ, ບັນດາເມືອງ
   - ປະສານງານກັບບໍລິສັດ, ສະຖາບັນທີ່ເຮັດວຽກເປັນສູນຝຶກອົບຮົມ ເພື່ອແຊກັບຄູ່ຮ່ວມງານ
5) ເພີ່ມຄວາມຮັບຜິດຊອບ ແລະ ຄວາມສາມາດຂອງພະນັກງານ ພົວພັນການຮ່ວມມື ແລະ ທີມງານຄູຝຶກ
6) ປັບປຸງຟາມ/ບ່ອນປະຕິບັດຕົວຈິງຂອງແຕ່ລະຫຼັກສູດ.

**ປະທານກອງປະຊຸມ ວກປໜ** | **ຜູ້ຮັບຜິດຊອບກອງປະຊຸມ**

ທອງສະຫວັດ ພູມມະສອນ